# ໂຮງຮຽນວັນອາທິດ

**ວັນອາທິດ ທີ 28 ເດືອນ ມີນາ 2010 (3/28/2010)**

---

**ເມື່ອການນະມັສການບໍ່ໄດ້ຖວາຍກຽດແກ່ພຣະເຈົ້າ.**

**ຂໍ້ພຣະຄັມພີໃນບົດຮຽນ:** 1 ໂກຣິນໂທ 11: 17-34

**ຜົນສະທ້ອນຕໍ່ຊີວິດ:**

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ໄດ້ຄິດທົບທວນເບິ່ງອຸປະນິສັຍໃນທີ່ຜ່ານມາທີ່ເປັນການຂັດຂວາງຕໍ່ຄວາມສຳຄັນໃນກຸ່ມການປະຊຸມນະມັສການ.

**ເປົ້າໝາຍຂອງບົດຮຽນ:**

ບົດຮຽນນີ້ແມ່ນເວົ້າເຖິງການປະພຶດປະຕິບັດທີ່ເປັນພື້ນຖານທີ່ສຳຄັນໃນການປະກອບການທຳພິທີສິນມະຫາສນິດແລະຂໍ້ມູນຂອງປະສົບການທັງໝົດໃນການນະມັສການ.

**ຄວາມສຳຄັນຂອງບົດຮຽນ:**

ບົດຮຽນນີ້ມີຄວາມສຳຄັນຫຼາຍເພາະວ່າຢູ່ໃນຜູ້ໃຫຍ່ເຮົາຈຳນວນນຶ່ງໃນເວລາທຳພິທີການນະມັສການນັ້ນສ່ວນໃຫຍ່ມັກສຸມຈຸດສົນໃຈໃສ່ຄວາມສຳຄັນທີ່ຕົວເອງແລະອັນໃດທີ່ເປັນຄວາມຫວັງຂອງເຂົາຈາກປະສົບການ. ໃນຂະນະທີ່ເຮົານັ່ງໃນສະຖານທີ່ນະມັສການ, ຄວາມຕັ້ງໃຈຂອງເຮົາໃນເວລານັ້ນຄວນຈະມີໃຈຈົດຈໍ່ໃສ່ໃນພຣະຄຣິດແລະສິ່ງທີ່ພຣະອົງໄດ້ກະທຳເພື່ອທຸກໆຄົນທີ່ເຊື່ອແລະຄຣິສຕະຈັກ.

ໃນຫຼາຍປີຜ່ານມາຂ້າພະເຈົ້າໄດ້ເບິ່ງຮູບເງົາເຣື່ອງນຶ່ງກ່ຽວກັບຄວາມເປັນຈິງໃນຊີວິດໃນຣັດເທກຊັສ ໃນປີ 1930. ຄວາມຫວຸ້ນວາຍໃນສັງຄົມມະນຸດ, ການຫຼິ້ນຊູ້, ແລະຄວາມໂຫດຮ້າຍປ່າເຖື່ອນກຳລັງເປັນເຣື່ອງໃຫຍ່ໃນຮູບເງົານີ້. ໃນຕອນສລຸບສຸດທ້າຍຂອງຮູບເງົາ ໄດ້ສະແດງໃຫ້ເຫັນເຖິງຮູບພາບຂອງການນັ່ງຮ່ວມໂຕະຮັບປະທານອາຫານກັບອົງພຣະເຢຊູຄຣິດທີ່ຈະໄດ້ຈັດຮັບຕ້ອນສາມະຊິກຄຣິສຕະຈັກ. ບຸກຄົນທີ່ເຄີຍຕໍ່ສູ້ກັນກໍເຂົ້າມານັ່ງຮ່ວມຢູ່ໂຕະດຽວກັນ. ຮ່ວມຮັບເຂົ້າຈີ່ແລະຮັບນໍ້າອະງຸ່ນນຳກັນໃນວັນສິນມະຫາສນິດ. ຕາມຄວາມເປັນຈິງແລ້ວຜູ້ກຳກັບການສະແດງມີເຈດຕະນາໃຫ້ເຮົາເຫັນສິ່ງທີ່ເປັນຄວາມກົງກັນຂ້າມທີ່ບໍ່ເປັນໜ້ານິຍົມຊົມຊອບຂອງປາກົດການເປັນຈິງໃນຊີວິດ ໃນຄວາມຄິດຄວາມເຫັນທີ່ເກີດຂຶ້ນໃນທຸກສະພາບການ. ຄົນສ່ວນຫຼາຍມີຄວາມສົນໃຈໃນພຣະເຈົ້າໂດຍເບິ່ງຜ່ານທາງສະມາຊິກຄຣິສຕະຈັກທີ່ເຫັນຄວາມສຳຄັນໃນການເຂົາຮ່ວມນະມັສການ.

ຈາກການຮຽນບົດຮຽນນີ້ແລ້ວສາມາດຊ່ວຍເຮົາສັງເກດເຫັນໄດ້ວ່າການປະພຶດປະຕິບັດຂອງເຮົານັ້ນແມ່ນໄດ້ແນໃສ່ໃຫ້ເຫັນຄວາມສຳຄັນໃນການຖວາຍກຽດແກ່ພຣະເຈົ້າໃນພິທີການນະມັສການແລະໃນການທຳພິທີສິນມະຫາສນິດແລ້ວບໍ່.

## ສຶກສາພຣະຄັມພີ

**1. ຮ່ວມກັນເປັນອັນນຶ່ງອັນດຽວ** 1ໂກຣິນໂທ 11:17-22, 33-34

ແມ່ນເຂົາ "ນະມັສການຄວາມຂັດແຍ້ງ" ກັນບໍທີ່ເມືອງໂກຣິນໂທ? ທ່ານໂປໂລໄດ້ເລີ້ມຕົ້ນຈົດໝາຍຂອງເພິ່ນດ້ວຍການຈົດຈໍ່ໃສ່ການຂາດຄວາມສາມັກຄີໃນໝູ່ຄຣິສຕຽນທີ່ເມືອງໂກຣິນໂທ (1:10). ພວກເຂົາໄດ້ແບ່ງອອກເປັນສອງກຸ່ມດ້ວຍການໃຫ້ຄວາມຈົ່ງຮັກພັກດີກັບຜູ້ນຳທີ່ແຕກຕ່າງກັນ, ເຊັ່ນໂປໂລແລະອາໂປໂລ. ບາງພາກສ່ວນຂອງກຸ່ມທີ່ແຕກແຍກໃນໂກຣິນໂທນັ້ນໂດຍສ່ວນໃຫຍ່ແມ່ນມີແນວຄິດທີ່ເຫັນແກ່ຕົວຫຼື ຄວາມທະເຍີທະຍານເປັນສ່ວນໃຫຍ່.

> ເມື່ອທ່ານໂປໂລຫັນມາເບິ່ງການຮ່ວມນະມັສການຂອງເຂົາ, ທ່ານໄດ້ສັງເກດເຫັນວ່າມີຫຼາຍຊະນິດບັນຫາຂອງຄວາມແຕກແຍກໃນການຂາດຄວາມສາມັກຄີ. ທ່ານມີຄວາມຕ້ອງການທີ່ຢາກຈະສົ່ງເສີມຫຼືໃຫ້ຄຳຊົມເຊີຍເຂົ້າໃນການນະມັສການຂອງເຂົາ, ແຕ່ໃນຄວາມຮູ້ສຶກຂອງຜູ້ຮູ້ຮັບຜິດແລະຊອບແລ້ວທ່ານບໍ່ມີຄວາມສາມາດເຮັດໄດ້.ແທນທີ່ຈະເປັນການນະມັສການພຣະເຈົ້າດ້ວຍຈິດວິນຍານແລະຄວາມຈິງ, ພວກເຂົາຊໍ້າມີການແບ່ງແຍກ. ໃນຄວາມບໍຣິສຸດໃຈຂອງທ່ານໂປໂລໃນຈົດໝາຍສະບັບນີ້ອາດຈະທຳໃຫ້ປລາດໃຈຜູ້ອ່ານບາງທ່ານ, ແຕ່ຂ້າພະເຈົ້າເຫັນທ່ານໂປໂລຕິດຕາມຄຳແນະນຳຂອງເພິ່ນທີ່ສະແດງໃຫ້ເຫັນເຖິງການຍຶດຖືເອົາຄວາມຈິງດ້ວຍໃຈຮັກ (ເອເຟໂຊ4:15).

ເຖິງແມ່ນວ່າຄຣິສຕຽນໃນໂກຣິນໂທມາຮ່ວມກັນນະມັສການແລະພິທີສິນມະຫາສນິດ, ພວກເຂົາບໍ່ເປັນອັນນຶ່ງອັນດຽວກັນແລະກໍເປັນຄວາມຈິງໄດ້ມີການໂຕ້ຖຽງກັນເຖິງເລື່ອງຂອງຄວາມຄິດຂອງຄວາມ ເປັນອັນນຶ່ງອັນດຽວໃນການນະມັສການ. ເມື່ອຄຣິສຕຽນຮ່ວມກັນກິນແລະດື່ມຂອງວັນສິນມະຫາສນິດ, ພວກເຂົາຄວນສຸມໃຈໃສ່ໃນຄວາມສາມັກຄີຂອງເຂົາເໝືອນເປັນຮ່າງກາຍຂອງພຣະຄຣິດ. ທ່ານໂປໂລໄດ້ຖາມເຂົາເຖິງຄວາມຮູ້ສຶກຂອງເຂົາ: ພວກເຂົາມາຮ່ວມໃຈກັນນະມັສການດ້ວຍຄວາມຈິງບໍ່?

ນັກສຶກສາພຣະຄັມພີບອກໃຫ້ເຮົາຮູ້ວ່າຄຣິສຕະຈັກໃນສມັຍເລີ້ມແລກເຂົາໄດ້ມີການຮ່ວມຮັບປະທານອາຫານຮ່ວມກັນໃນວັນທີ່ທຳພິທີສິນມະຫາສນິດ. ການຮັບປະທານອາຫານນີ້ເພື່ອເປັນການສະແດງຄວາມຜູກພັນຄວາມຮັກ (ຢູດາ 12)ເພື່ອຈະເຮັດໃຫ້ເຂົາມີຄວາມໃກ້ຊິດກັນຫຼາຍຂຶ້ນໃນໝູ່ຄຣິສຕຽນແລະໃນຄວາມຮັກຂອງພຣະຄຣິດ. ແຕ່ແທນທີ່ຈະເປັນຢ່າງນັ້ນການຮັບປະທານອາຫານນັ້ນພັດບໍ່ເປັນລະບຽບ ບາງຄົນກິນກ່ອນທີ່ພວກນຶ່ງຈະມາເຖິງ, ແລະໃນບາງຄົນກໍເມົາແລ້ວ. ຄຣິສຕຽນທີ່ຮັ່ງມີມາຮອດກ່ອນກໍເລີ້ມຮັບປະທານອາຫານກ່ອນຄຣິສຕຽນທີ່ເປັນຊົນຊັ້ນທັມດາຈະມາເຖິງ. ການກະທຳເຊັ່ນນີ້ໄດ້ສະແດງໃຫ້ທ່ານໂປໂລເຫັນໄດ້ເດັ່ນຊັດເລີຍວ່າເຂົາຂາດຄວາມສາມັກຄີ ໃນສມັຍທຸກມື້ນີ້ກໍມີເຫດການທີ່ຄ້າຍຄືກັນຄືການເຮັດອາຫານມາກິນຮ່ວມກັນໃນຄຣິສຕະຈັກ ທີ່ນັ້ນໄດ້ມີບາງຄົນໄດ້ກິນອາຫານທີ່ເປັນໜ້າແຊບກ່ອນຜູ້ອື່ນແລະຜູ້ທີ່ມາຊ້າກໍມີອາຫານພຽງແຕ່ນ້ອຍດຽວບໍ່ພໍກິນ. ດັ່ງນັ້ນຫຼັງຈາກການຮ່ວມກັນຮັບພິທີສິນມະຫາສນິດແລ້ວການຮ່ວມຮັບປະທານອາຫານຈຶ່ງບໍ່ໄດ້ນຳເອົາຜົນປໂຍດອັນໃດໃຫ້ກັບຄວາມສາມັກຄີໃນຄຣິສຕະຈັກ.

ທ່ານໂປໂລຄິດວ່າເຂົາຄວນກິນມາແຕ່ບ້ານໃຫ້ເປັນທີ່ຮຽບຮ້ອຍກ່ອນທີ່ເຂົາຈະມາທຳພິທີສິນມະຫາສນິດ. ໃນເຫດການທັງໝົດນັ້ນມັນໄດ້ນຳເອົາຄວາມອັບອາຍມາໃຫ້ກັບທ່ານໂປໂລ. ທ່ານໄດ້ແນະນຳວ່າເຂົາສົມຄວນທີ່ຈະຄອຍຖ້າເຊິ່ງກັນແລະກັນເພື່ອທຸກຄົນຈະຮ່ວມຮັບປະທານອາຫານຮ່ວມກັນ. ທ່ານໂປໂລມີຄວາມໝັ້ນໃຈວ່າບໍ່ມີສິ່ງໃດທີ່ຈະຢູ່ເໜືອຄວາມອ່ອນສຸພາບ ທ່ານຕ້ອງການໃຫ້ວັນສິນມະຫາສນິດເປັນແບບຢ່າງໃນຄວາມເປັນອັນນຶ່ງອັນດຽວກັນໃນພຣະກາຍຂອງພຣະຄຣິດ.

## 2. <u>ຈົ່ງເບິ່ງໄປທີ່ພຣະເຢຊູ</u> ໂກຣິນໂທ 11:23 -26

ທ່ານໂປໂລຕ້ອງການໃຫ້ຄຣິສຕຽນໃນເມືອງໂກຣິນໂທໄດ້ເຂົ້າໃຈເຖິງຈຸດປະສົງທີ່ແທ້ຈິງຂອງສິນມະຫາສນິດ, ສະນັ້ນເພິ່ນຈຶ່ງໄດ້ອະທິບາຍວິທີທີ່ພຣະເຢຊູຄຣິດຕັ້ງໄວ້. ເຮົາບໍ່ຮູ້ໄດ້ຢ່າງແທ້ຈິງວ່າທ່ານໂປໂລໄດ້ຮຽນຮູ້ລາຍລະອຽດຂອງຫ້ອງຊັ້ນເທິງໄດ້ຢ່າງໃດ. ບາງທີພຣະເຢຊູໄດ້ເປີດເຜີຍໃຫ້ເພິ່ນຮູ້ເອງ, ຫຼືບາງທີເພິ່ນອາດໄດ້ຮູ້ຈັກເລື່ອງນີ້ຈາກຜູ້ນຳຄຣິສຕຽນຄົນອື່ນເຊັ່ນ ຊີໂມນ ເປໂຕ.

ພຣະເຢຊູໄດ້ພິສູດໃຫ້ເຫັນວ່າ**ເຂົ້າຈີ່**ເປັນເໝືອນ**ພຣະກາຍ**ຂອງພຣະອົງ. ພຣະອົງຊົງຍອມສລະຊີວິດຝ່າຍເນື້ອໜັງເທິງໄມ້ກາງແຂນເພື່ອຄວາມບາບຂອງມະນຸດຊາດ. ພຣະເຢຊູໄດ້ໃຊ້ຈອກເພື່ອແທນຄຳສັນຍາໃໝ່ທີ່ຈະໄດ້ຕັ້ງໄວ້ກັບການສິ້ນພຣະຊົນແລະການຄືນພຣະຊົນຂອງພຣະອົງ. ເມື່ອຄຣິສຕຽນມີສ່ວນຮ່ວມຫັກເຂົ້າຈີ່ແລະດື່ມນໍ້າອະງຸ່ນຈາກຈອກອະງຸ່ນໃນທຸກວັນນີ້, ເຂົາຄວນລະນຶກເຖິງຂອງພຣະຣາຊທານທີ່ພຣະເຢຊູຊົງປະທານໃຫ້ຄືຄວາມພົ້ນ. ແທ້ຈິງແລ້ວການປະຕິບັດສິນມະຫາສນິດແມ່ນການສັ່ງສອນທີ່ສາມາດເຫັນໄດ້, ເປັນການປ່າວປະກາດຄຳສອນຂອງພຣະເຢຊູ.

ທ່ານໂປໂລບໍ່ໄດ້ຖືວ່າພິທີສິນມະຫາສນິດນີ້ເປັນເຣື່ອງເລັກນ້ອຍໃນສາສນາ. ພິທີສິນມະຫາສນິດແມ່ນເປັນພິທີທີ່ສຳຄັນ, ສັກສິດແລະມີຣິດອຳນາດໃນການປະກາດເຖິງພຣະກິດໃຈຂອງຂ່າວປະເສີດ. ທາດແທ້ຂອງສິນມະຫາສນິດແມ່ນເປັນການບຳຣຸງລ້ຽງຊີວິດຝ່າຍຈິດວິນຍານຂອງຄຣິສຕຽນ. ຈຸດສູນກາງຂອງພິທີສິນມະຫາສນິດກໍແມ່ນໃຫ້ລະນຶກເຖິງພຣະເຢຊູ. ໃນເມື່ອສະມາຊິກບໍ່ລົງລອຍກັນກໍເປັນການຍາກໃນການທີ່ຈະສຸມຈິດໃຈໃສ່ພຣະເຢຊູຄຣິດ. ທ່ານໂປໂລໄດ້ພົບວ່າຄຣິສຕຽນໃນເມືອງໂກຣິນໂທໄດ້ຖົກຖຽງກັນວ່າແມ່ນໃຜກິນຫຍັງແລະກິນເມື່ອໃດ, ແທນທີ່ຈະເອົາໃຈໃສ່ລະນຶກເຖິງການວາຍພຣະຊົນຂອງພຣະເຢຊູເທິງໄມ້ກາງແຂນຫຼາຍກ່ວາສິ່ງອື່ນ.

> ຄຣິສຕຽນຫຼາຍຄະນະກໍມີການໂຕ້ຖຽງກັນຢ່າງຍືດຍາວກ່ຽວກັບລາຍລະອຽດຂອງການແປຄວາມໝາຍຂອງພິທີສິນມະຫາສນິດ, ແຕ່ວ່າ, ໂດຍທົ່ວໄປແລ້ວຄຣິສຕຽນກໍລົງຄວາມເຫັນວ່າພິທີສິນມະຫາສນິດນີ້ແມ່ນເນັ້ນໃສ່ພຣະເຢຊູຄຣິດບໍ່ແມ່ນຜູ້ມານະມັສການຫຼືຜູ້ນຳພິທີນະມັສການ. ທຸກຄົນທີ່ຮ່ວມນະມັສການຄວນຖວາຍກຽດແດ່ພຣະເຈົ້າ, ແລະສິນມະຫາສນິດຄວນປະກາດຄວາມເປັນນໍ້າໜຶ່ງໃຈດຽວກັນຂອງຄຣິສຕະຈັກຄືພຣະກາຍຂອງພຣະຄຣິດ.

## 3. <u>**ຈົ່ງພິຈາຣະນາເບິ່ງຕົນເອງ.**</u> 1ໂກຣິນໂທ 11:27 - 32

ພວກເຮົາມັກຈະໃຊ້ເວລາຫຼາຍທີ່ສຸດໃນການກະຕຽມສຳລັບງານໃຫຍ່ໆ, ເຊັ່ນງານແຕ່ງດອງຫຼືວ່າມີເພື່ອນຝູງຄົນສຳຄັນຈະມາຢ້ຽມຢາມ. ທ່ານໂປໂລຕ້ອງການໃຫ້ຄຣິສຕະຈັກໃນເມືອງໂກຣິນໂທມີການກຽມພ້ອມໃນທາງທີ່ຖືກຕ້ອງເມື່ອເຂົາຮັບພິທີສິນມະຫາສນິດ. ໃນພິທີສິນມະຫາສນິດນີ້ພວກເຂົາສົມຄວນທີ່ຈະກິນແລະດື່ມດ້ວຍຄວາມອ່ອນສຸພາບແລະມາຣະຍາດອັນດີພ້ອມທັງເຫັນຄຸນຄ່າແລະຄວາມສຳຄັນຂອງພິທີນີ້ດ້ວຍ. ການສເລີມສລອງສິນມະຫາສນິດກໍຈະບໍ່ມີຄວາມໝາຍຫຍັງໝົດຖ້າຫາກສະມາຊິກຄຣິສຕະຈັກບໍ່ເປັນອັນໜຶ່ງອັນດຽວກັນ. ທ່ານໂປໂລໄດ້ປຽບທຽບຄຣິສຕະຈັກເປັນເໝືອນຮ່າງກາຍຂອງມະນຸດ; ຄຣິສຕະຈັກນັ້ນແມ່ນພຣະກາຍຂອງພຣະຄຣິດ. ຖ້າຫາກຄຣິສຕະຈັກນັ້ນມີການແຕກແຍກກັນການທຳພິທີສິນມະຫາສນິດກໍບໍ່ມີຄວາມໝາຍຫຍັງໝົດສຳລັບຄຣິສຕະຈັກນັ້ນ.

> ດອກກຸນແຈອັນສຳຄັນໃນການກະຕຽມທີ່ຈະຮັບສິນມະຫາສນິດນັ້ນກໍຄືການທີ່ເຮົາຈະພິຈາຣະນາເບິ່ງຕົວເຮົາເອງ. ຊີວິດຝ່າຍຈິດວິນຍານຂອງເຮົາມີອັນໃດແດ່ສົມຄວນມີການປ່ຽນແປງ. ຈົ່ງພິຈາຣະນາໃໝ່ຕໍ່ການດຳລົງຊີວິດຂອງເຮົາ, ທັສະນະຄະຕິແລະຄວາມບາບທີ່ຍັງບໍ່ສາລະພາບ. ພວກເຮົາຕ້ອງສາລະພາບຄວາມບາບນັ້ນຕໍ່ພຣະເຈົ້າ, ແລະເຊື່ອໝັ້ນວ່າພຣະເຈົ້າຈະໃຫ້ອະພັຍແກ່ເຮົາ. ພຣະເຢຊູສິ້ນພຣະຊົນທີ່ໄມ້ກາງແຂນກໍເພື່ອຄວາມລອດພົ້ນຂອງພວກເຮົາແລະການວາຍພຣະຊົນນັ້ນກໍແມ່ນແນໃສ່ສິນມະຫາສນິດນີ້ເອງ. ບໍ່ມີມະນຸດຄົນໃດເປັນຄົນດີເລີດແລະຫາບ່ອນຕິບໍ່ໄດ້. ດັ່ງນັ້ນເຮົາຈຶ່ງຄວນສາລະພາບຄວາມບາບຕໍ່ພຣະເຈົ້າຢ່າງສມໍ່າສເມີ. ດັ່ງນັ້ນຈະເປັນການດີທີ່ສຸດຖ້າພວກເຮົາທຸກຄົນຫາກຍອມຮັບຮູ້ຄວາມບາບຂອງຕົນເອງກ່ອນທີ່ຈະເຂົ້າທຳພິທີສິນມະຫາສນິດ.

ທ່ານໂປໂລໄດ້ເວົ້າແລ້ວເວົ້າອີກວ່າຄຣິສຕຽນຜູ້ທີ່ເຕັມໄປດ້ວຍຄວາມບາບນັ້ນກໍຈະຖືກພິພາກສາລົງໂທດຈາກພຣະເຈົ້າເພາະເປັນການເຂົ້າຮ່ວມພິທີສິນມະຫາສນິດທີ່ບໍ່ຖືກຕ້ອງ. ວິທີທາງທີ່ຈະຫຼີກລ້ຽງຈາກການຖືກພິພາກສາລົງໂທດກໍຄືໃຫ້ເຮົາໄດ້ພິຈາຣະນາຕົວເຮົາເອງວ່າຊີວິດຝ່າຍຈິດວິນຍານຂອງເຮົາຍັງມີພຣະເຈົ້າຢູ່ບໍ່.

ຂະນະທີ່ພວກເຮົາຜູ້ຊຶ່ງເປັນຄຣິສຕຽນເຮົາມີຄວາມຊົມຊື່ນຍິນດີແລະຮູ້ທີ່ຈະຂອບພຣະຄຸນໃນການວາຍພຣະຊົນຂອງພຣະຄຣິດເພື່ອໃຫ້ພວກເຮົາໄດ້ຮັບຄວາມລອດພົ້ນ. ທ່ານໂປໂລບໍ່ໄດ້ອະທິບາຍຢ່າງລະອຽດໃນແຕ່ລະຂັ້ນຕອນ

ຂອງການທຳພິທີສິນມະຫາສນິດ,ເຊັ່ນຂັ້ນຕອນຂອງການຫຼິ້ນດົນຕຣີ, ຫຼືການປະກອບພິທີການອື່ນໆທີ່ກ່ຽວກັບລະບຽບການປະຕິບັດພິທີສິນມະຫາສນິດທີ່ຄຣິສຕະຈັກເມືອງໂກຣິນໂທ ແຕ່ສິ່ງດຽວທີ່ທ່ານຕ້ອງການໃຫ້ເອົາໃຈໃສ່ທີ່ສຸດກໍ່ຄືການແນເປົ້າໝາຍໃສການລະນຶກເຖິງອົງພຣະເຢຊູຄຣິດ.

## ບົດຮຽນແຫ່ງຊີວິດ.

ການທຳພິທີສິນມະຫາສນິດເປັນການລະນຶກເຖິງການວາຍພຣະຊົນແລະການຄືນພຣະຊົນຂອງອົງພຣະເຢຊູຄຣິດ. ຄວາມລອດພົ້ນຂອງພວກເຮົາໄດ້ມາກໍຍ້ອນເຫດການນີ້, ແລະພວກເຮົາກໍ່ສົມຄວນທີ່ຈະສເລີມສລອງພິທີສິນມະຫາສນິດນີ້. ໃນການທຳພິທີນີ້ບໍ່ແມ່ນເຮົາຈະມອງເບິ່ງເຫັນແຕ່ຄວາມສຳຄັນໃນຕົວຂອງເຮົາເອງ, ໃຫ້ເຮົາສຸມໃຈໃສ່ອົງພຣະເຢຊູຄຣິດໂດຍກົງແລະຖວາຍການສັຣເສີນດ້ວຍຈິດວິນຍານແລະຄວາມຈິງ. ບັນຫາໃຫຍ່ໃນຄຣິສຕະຈັກເມືອງໂກຣິນໂທກໍ່ຄືການຂາດຄວາມສາມັກຄີບໍ່ເປັນອັນນຶ່ງອັນດຽວກັນ, ທ່ານໂປໂລໄດ້ແນະນຳໃຫ້ເຂົາເຈົ້າເປັນອັນນຶ່ງອັນດຽວກັນເສັຽກ່ອນຈຶ່ງທຳພິທີສິນມະຫາສນິດ. ການສາລະພາບຄວາມບາບເປັນໝາກຫົວໃຈໃນການກະຕຽມໃນການທຳພິທີສິນມະຫາສນິດ.

- ❖ ເຮົາສົມຄວນພິຈາຣະນາເບິ່ງເຫດຜົນທີ່ພວກເຮົາເຂົ້າຮ່ວມນະມັສການພຣະເຈົ້ານັ້ນມີຈຸດປະສົງອັນໃດ? ເຮົານະມັສການພຣະເຈົ້າຫຼືເຮົາສ້າງຄວາມສົນໃຈໃຫ້ຜູ້ອື່ນສົນໃຈໃນເຮົາ?
- ❖ ຄວາມຮັ່ງມີຫຼືຍາກຈົນ, ລະດັບການສຶກສາ, ຫຼືວ່າການແຕກຕ່າງເຊື້ອຊາດເຜົ່າພັນເປັນສາຍເຫດໃຫ້ມີຜົນກະທົບກະເທືອນຕໍ່ການນະມັສການພຣະເຈົ້າບໍ່? ຄຸນສົມບັດຂອງມະນຸດໄດ້ແບ່ງແຍກເຮົາບໍ່?
- ❖ ເຮົາຈະປະພຶດປະຕິບັດຕົວຢ່າງໃດຮົາຈຶ່ງຈະບໍ່ເປັນຄົນທີ່ເບິ່ງເຫັນພິທີສິນມະຫາສນິດນັ້ນເປັນພຽງແຕ່ພິທີທາງສາສນາເທົ່ານັ້ນ?
- ❖ ເຮົາຄວນຕຽມຈິດຕຽມໃຈສຳຣວດກວດເບິ່ງຕົວເຮົາເອງແລ້ວຫຼືບໍ່ກ່ອນເຮົາຈະເຂົ້າທຳພິທີສິນມະຫາສນິດ?ໃນການເຂົ້າເຝົ້າພຣະເຈົ້າເຮົາເອງໄດ້ກະຕຽມແລະພ້ອມທີ່ຈະສາລະພາບຄວາມພິດຄວາມບາບຂອງເຮົາຕໍ່ພຣະເຈົ້າແລ້ວຫຼືບໍ່?

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** WWW.lsbf.org **ໂດຍ LLBC.**